ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຊາວໜຸ່ມຮາກຖານ ທຫລ ຍົກລະດັບຄວາມຮູ້ກ່ຽວກັບ ການຄຸ້ມຄອງທະນາຄານທຸລະກິດ




ຄະນະບໍລິຫານງານຊາວໜຸ່ມຮາກຖານທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສ້າງຂະບວນການດ້ານວິຊາສະເພາະໃນຫົວຂໍ້: "ແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ (Basel)" ຂຶ້ນໃນວັນທີ 27 ມິຖຸນາ 2019 ທີ່ຜ່ານມາ ທັງນີ້ກໍ່ເພື່ອເປັນການສ້າງບັນຍາກາດຂໍານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ IV ຂອງຊາວໜຸ່ມຮາກຖານ ທຫລ. ໂດຍການເຂົ້າຮ່ວມຂອງສະຫາຍນາງ ດວງໃຈ ໄຊສົງຄາມ ຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ ພ້ອມດ້ວຍຜູ້ບັນຍາຍຈາກໜ່ວຍຊາວໜຸ່ມກົມຄຸ້ມຄອງທະນາຄານທຸລະກິດ ແລະ ມີບັນດາສະມາຊິກຊາວໜຸ່ມຈາກກົມ ແລະ ທຽບເທົ່າກົມທົ່ວ ທຫລ ເຂົ້າຮ່ວມ 40 ສະຫາຍ.

ການສ້າງຂະບວນການໃນຄັ້ງນີ້ເພື່ອເຮັດໃຫ້ສະມາຊິກຊາວໜຸ່ມ ທຫລ ຮັບຮູ້ ແລະ ເຂົ້າໃຈກ່ຽວກັບມາດຕະຖານບາເຊວຊຶ່ງເປັນມາດຕະຖານທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງທະນາຄານທຸລະກິດໃນລະດັບສາກົນ, ຊຶ່ງວຽກງານການຄຸ້ມຄອງທະນາຄານທຸລະກິດແມ່ນນອນຢູ່ໃນ 3 ເສົາຄໍ້າວຽກງານຍຸດທະສາດຂອງ ທຫລ ໃນການຄຸ້ມຄອງຄວາມໝັ້ນຄົງຂອງສະຖາບັນການເງິນ ຄຽງຄູ່ກັບການຮັກສາສະຖຽລະພາບທາງດ້ານເງິນຕາແຫ່ງຊາດ ແລະ ການຄຸ້ມຄອງລະບົບຊໍາລະສະສາງ ເພື່ອເປັນການປະກອບສ່ວນໃຫ້ແກ່ການຊຸກຍູ້ພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ໃນປັດຈຸບັນ ທຫລ ໄດ້ສໍາເລັດການສ້າງແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ແລະ ກໍາລັງຜັນຂະຫຍາຍວຽກງານດັ່ງກ່າວເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ.

ນອກນີ້ວິທະຍາກອນຈາກໜ່ວຍຊາວໜຸ່ມກົມຄຸ້ມຄອງທະນາຄານທຸລະກິດ ໄດ້ບັນຍາຍລົງເລິກກ່ຽວກັບຄວາມເປັນມາຂອງມາດຕະຖານບາເຊວ, ເນື້ອໃນໂດຍລວມຂອງແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ຊຶ່ງເປັນແຜນຍຸດທະສາດໄລຍະ 10 ປີ 2016-2025 ແລະ ວິໄສທັດຮອດ 2030 ຂອງ ທຫລ ແລະ ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບໃນການນໍາໃຊ້ Basel 2. ພ້ອມນັ້ນ, ຜູ້ເຂົ້າຮ່ວມໄດ້ຮັບຟັງ, ແລກປ່ຽນຄໍາຄິດເຫັນ ແລະ ສອບຖາມຂໍ້ມູນຢ່າງເປັນຂະບວນຟົດຟື້ນ ເຮັດໃຫ້ການສ້າງຂະບວນການໃນຄັ້ງນີ້ໄດ້ຮັບຜົນເປັນຢ່າງດີ.

**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**